# ວິທີການກ້າເບ້ຍຫວາຍ

ການປູກຫວາຍກໍ່ມີຫຼາຍວິທີທີ່ຈະນຳມາປະຕິບັດໄດ້ ເພື່ອນຳໃຊ້ເຂົ້າໃນການກ້າເບ້ຍເພື່ອໃຫ້ໄດ້ປະລິມານ ແລະ ຄຸນນະພາບພ້ອມທັງປະຢັດເວລາ ແລະ ຄ່າໃຊ້ຈ່າຍໃນການລົງທຶນ ເຊິ່ງວິທີທີ່ນັກວິຊາການ ແລະ ປະຊາຊົນຜູ້ທີ່ສົນໃຈນິຍົມນຳເອົາໄປໃຊ້ມີ 2 ວິທີຄື:

## 1. ວິທີກ້າເບ້ຍດ້ວຍການກະຕຸ້ນແກ່ນດ້ວຍນ້ຳ

### ຂັ້ນຕອນການກະກຽມ

### 1.1 ການເກັບແກ່ນ

ກ່ອນອື່ນຕ້ອງຮູ້ລະດູການເກັບແກ່ນ ຕ້ອງສັງເກດເບິ່ງສີຂອງໝາກຫວາຍວ່າໝາກສຸກເໝາະສົມທີ່ຈະນຳມາກ້າ.



ຮູບ: ແກ່ນຫວາຍ

### 1.2 ການກະກຽມແກ່ນຫວາຍ

ເກັບໄວ້ໃນຮົ່ມ ຫຼື ໃນຫ້ອງທີ່ມີລົມລ່ວງດີ, ບໍ່ໃຫ້ເກັບໄວ້ເກີນ 1 ເດືອນເພາະຈະເຮັດໃຫ້ອັດຕາການງອກຕ່ຳ. ເມື່ອເກັບໝາກຫວາຍມາແລ້ວປະຕິບັດດັ່ງຂັ້ນຕອນລຸ່ມນີ້:

☺ ນຳເອົາມາກຫວາຍທີ່ສຸກມາແກະເປືອກ ແລະ ນວດຫຸ້ມແກ່ນອອກໃຫ້ໝົດ ເຊິ່ງເຮັດໄດ້ຫຼາຍວິທີ (ຕຳແກ່ນປະສົມຂີ້ຊາຍ, ລ້າງແກ່ນໃນນ້ຳ)

☺ ນຳແກ່ນລົງແຊ່ນ້ຳເພື່ອກະຕຸ້ນການແຕກງອກ.

### 1.3 ຂັ້ນຕອນການປະຕິບັດ

ນຳແກ່ນທີ່ປອກເປືອກ ແລະ ແກະນວນອອກແລ້ວໄປແຊ່ນ້ຳໄວ້ປະມານ 7 ວັນ.

☺ ກະກຽມໜານໃສ່ ໜ້າດິນດ້ວຍການຂຸດ ແລະ ຍ່ອຍດິນໃຫ້ລະອຽດແລ້ວປະຕາກແດດໄວ້.

☺ ສ້າງຂອບໜານໃຫ້ສູງ ແລະ ເລິກ 10—20 ຊມ




☺ ນຳແກ່ນທີ່ແຊ່ແລ້ວໄປຫວ່ານໃສ່ໜານໃຫ້ສະເໝີກັນ ໜານກວ້າງ, ຍາວ ຂະໜາດ 1x4 ມ ໃຊ້ແກ່ນຫວາຍ ຈຳນວນ 10 ກກ. (ກິໂລກຼາມ)



ຮູບ: ການຫວ່ານແກ່ນໃສ່ໜານ

☺ ນຳໃຊ້ດິນ ຫຼື ຂີ້ຊາຍປົກດ້ານເທິງຂອງໜານຫຼັງຈາກຫວ່ານແກ່ນແລ້ວ ເພື່ອບໍ່ໃຫ້ແກ່ນຢູ່ໃນໜານຟູຂຶ້ນເທິງໜ້າດິນ ເວລາຫົດນ້ຳຫຼື ເວລາຝົນຕົກໃສ່ໜານແຮງ.ຫົດນ້ຳເຊົ້າແລະ ແລງຈົນກວ່າແກ່ນຫວາຍຈະເກີດ ຫຼື ແຕກງອກ (ຖ້າຝົນບໍ່ຕົກ).

## 2. ວິທີກ້າແກ່ນດ້ວຍ ການແກະຕາຫວາຍ

ວິທີນີ້ມີໄລຍະການແຕກງອກສັ້ນກວ່າ ແລະ ເປັນວິທີທີ່ມີຜົນດີຕໍ່ການຄັດເລືອກແກ່ນທີ່ສົມບູນ ແລະ ບໍ່ສົມບູນ.

### 2.1 ກະກຽມວັດຖຸອຸປະກອນຮັບໃຊ້

- ຊາມຢາງຂະໜາດໜ້າຕັດ 30 — 40 ຊມ
- ມີດລ່ານທີ່ມີດ້າມ ແລະ ຄົມເຂົ້າດີເພື່ອແກະຕາ
- ຜ້າຢາງໃສເພື່ອໃຊ້ປົກຄຸມປາກຊາມ
- ເຊືອກມັດປາກຊາມເພື່ອບໍ່ໃຫ້ນ້ຳລະເຫີຍອອກ
- ຍຸ້ງໝາກພ້າວທີ່ຈີກໃຫ້ເປັນຝອຍນ້ອຍໆລະອຽດ
- ນ້ຳສຳລັບແຊ່ເປືອກໝາກພ້າວ
- ແກ່ນຫວາຍທີ່ແກະຕາແລ້ວໃຫ້ໄດ້ປະມານ 2 ກກ / ຊາມຢາງ



ການແກະຫວາຍ

### 2.2 ຂັ້ນຕອນການປະຕິບັດ

- ບໍ່ໃຫ້ແກ່ນທີ່ແກະຕາອອກນັ້ນຖືກນ້ຳ
- ນຳຍຸ້ງໝາກພ້າວລົງແຊ່ນ້ຳໃຫ້ປຽກປະມານ 20 ນາທີ
- ບີບນ້ຳຍຸ້ງໝາກພ້າວອອກໃຫ້ແຫ້ງສະໝັ່ງ (ຊຸ່ມ)
- ນຳເອົາຍຸ້ງໝາກພ້າວລົງໂຮຍໃສ່ຊາມຢາງທີ່ກຽມໄວ້ໜາປະມານ 5 —10 ຊມ.
- ນຳແກ່ນຫວາຍທີ່ແກະຕາແລ້ວຫວ່ານໃສ່ດ້ານເທິງຂອງຍຸ້ງໝາກພ້າວ.
- ເອົາຍຸ້ງໝາກພ້າວທີ່ບີບໃຫ້ສະໝັ່ງແລ້ວລົງປົກດ້ານເທິງ

ຂອງແກ່ນໃຫ້ໜາປະມານ 5 —10 ຊມ.




- ປົກຊາມດ້ວຍຜ້າຢາງໃສ ແລະ ມັດດ້ວຍເຊືອກໃຫ້ແໜ້ນເພື່ອກັນບໍ່ໃຫ້ນ້ຳຂ້າງໃນລະເຫີຍອອກໄປນອກ.
- ນຳຊາມແກ່ນຫວາຍທີ່ເຮັດສຳເລັດແລ້ວເກັບໄວ້ຮົ່ມບ່ອນທີ່ມີລົມລ່ວງດີ.
- ບໍ່ໃຫ້ໄຂຊາມກ່ອນກຳນົດການແຕກງອກ
- ໜໍ່ຫວາຍຈະແຕກງອກໃນ 15 ວັນ ຫຼັງຈາກການກ້າແລ້ວ, ແຕ່ຈະໃຊ້ເວລາແຕກງອກໃນ 60 ວັນ ຫຼືເມື່ອເຫັນໜໍ່ເບ້ຍຫວາຍຊູ່ວຂຶ້ນໃນຊາມເກີນກວ່າ50% ແມ່ນແກ່ນທີ່ກ້ານັ້ນແຕກງອກອອກມາເກືອບຄົບຖ້ວນ.

## 2.3 ການກຽມໜານ ແລະ ການປົ່ງເບ້ຍຫວາຍ

ໜານທີ່ຈະປົ່ງເບ້ຍຕ້ອງຢູ່ໃນຮົ່ມ ຫຼື ມຸງດ້ວຍຕານ່າງກັນແສງ 50%—70% ເພື່ອການຈະເລີນເຕີບໂຕຂອງເບ້ຍທີ່ຍັງນ້ອຍ (ຖ້າຮາກຂອງເບ້ຍຫວາຍຍາວເກີນໄປໃຫ້ຕັດຮາກອອກເຄິ່ງໜຶ່ງກ່ອນ).

### ກ. ຂັ້ນຕອນການປົ່ງເບ້ຍຫວາຍ

- ກ່ອນປົ່ງຕ້ອງຫົດນ້ຳໃສ່ເບົ້າດິນທີ່ກຽມໄວ້
- ໃຊ້ໄມ້ຊີດິນເປັນຮູຢູ່ເຄິ່ງກາງຂອງຖົງ
- ຖອນເບ້ຍທີ່ຢູ່ຍຸ້ງໝາກພ້າວ ຫຼື ໜານກ້າມາປົ່ງໃສ່ເບົ້າ
- ເມື່ອປົ່ງແລ້ວໃຊ້ນິ້ວມືບີບອ້ອມຂ້າງເບ້ຍໃຫ້ແໜ້ນ
- ເມື່ອສຳເລັດການປົ່ງເບ້ຍໃຫ້ຫົດນ້ຳໃສ່ເບ້ຍຈົນປຽກ

### ຂ. ຂໍ້ຄວນລະວັງ

ເມື່ອເວລາຈົ້ມ ຫຼື ຖອນເບ້ຍອອກຈາກຊາມ ຢ່າໃຫ້ແກ່ນທີ່ຕິດຢູ່ກັບເບ້ຍລົ່ນອອກເດັດຂາດ, ເພາະວ່າເບ້ຍນ້ອຍແຕ່ລະຕົ້ນຕ້ອງການອາຫານຈາກແກ່ນທີ່ຕິດຢູ່ນັ້ນໄປລ້ຽງລຳຕົ້ນ.

## 3. ການເບິ່ງແຍງຮັກສາ

ເມື່ອເບ້ຍຫວາຍມີອາຍຸໄດ້ 45 ວັນຂຶ້ນໄປຄວນໃສ່ຝຸ່ນ

- ຝຸ່ນຄອກໃຫ້ໂຮຍໃສ່ດ້ານເທິງຂອງເບົ້າໃນປະລິມານພໍຄວນ
- ຝຸ່ນວິທະຍາສາດສູດສະເໝີ NPK15—15—15 ໃສ່ໃນປະລິມານ 1 ບ່ວງແກງ / ນ້ຳ 20 ລິດ, ຫຼັງຈາກນັ້ນສາມເດືອນໃດໃຫ້ໃສ່ຝຸ່ນຄອກ ຫຼືວິທະຍາສາດໜຶ່ງຄັ້ງ (ກ່ອນຈະໃສ່ຝຸ່ນ ຫຼື ປຸຍໃຫ້ຢຸດຫົດນ້ຳກ່ອນ 1 ວັນ).


WWF
ໂທ: 021 216080
ຂໍ້ມູນເຕັກນິກຕິດຕໍ່
ທ່ານ ຄຳພອນ ແສງດາລາ
ໂທ: 020 6861101

LEAP
ໂທ: 021 740253
ຫຼື 021 740252

SUFORD
ໂທ: 021 740544
ຫຼື 021 740543



**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜູນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**


ສູນຂໍ້ມູນຂ່າວສານການສົ່ງເສີມ

# ວິທີການກ້າເບ້ຍຫວາຍ











NAFRI

ກ.ສ.ກ.ປ NAFES